ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ...013.../ປປທ

ນະຄອນຫຼວງວຽງຈັນ, ວັນທີ...23 ມັງກອນ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້

## ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 151/ສພຊ, ລົງວັນທີ 11 ທັນວາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 09/ຄປຈ, ລົງວັນທີ 9 ມັງກອນ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 151 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 11 / 12 / 24

**ມະຕິ**
**ກອງປະຊຸມສະພາແຫ່ງຊາດ**
**ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (ສະບັບປັບປຸງ)**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມຕອນເຊົ້າຂອງວັນທີ 10 ທັນວາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 11 ທັນວາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ. ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 72 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2024

# ກົດໝາຍ
# ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ເພື່ອໃຫ້ວຽກງານດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຢ່າງມີ ປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຍົກສູງສິດຂອງແມ່ຍິງ, ສົ່ງເສີມຄວາມຮູ້, ຄວາມສາມາດ, ຄຸນສົມບັດສົມທຳປະຕິວັດ, ຄວາມສະເໝີພາບຍິງ-ຊາຍ, ລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ຕ້ານ ແລະ ສະກັດກັ້ນການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ຮັບປະກັນໃຫ້ແມ່ຍິງໄດ້ຮັບການພັດທະນາຮອບດ້ານ ແລະ ໄດ້ຮັບການປົກປ້ອງສິດຜົນປະໂຫຍດອັນຊອບທຳ, ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ເຂົ້າຮ່ວມ ແລະ ເປັນກຳລັງແຮງໃນທຸກຂົງເຂດວຽກງານ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ໃໝ່) ການພັດທະນາ ແລະ ປົກປ້ອງແມ່ຍິງ**

ການພັດທະນາ ແລະ ປົກປ້ອງແມ່ຍິງ ແມ່ນ ການນຳໃຊ້ ຮູບການ, ວິທີການ ແລະ ມາດຕະການ ເພື່ອຮັບປະກັນໃຫ້ແມ່ຍິງ ໄດ້ຮັບການພັດທະນາໃນທຸກດ້ານ, ສົ່ງເສີມຄວາມກ້າວໜ້າ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ, ໄດ້ຮັບການຊ່ວຍເຫຼືອ ແລະ ຄຳປຶກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

**ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ແມ່ຍິງຖືກເຄາະຮ້າຍ** ໝາຍເຖິງ ແມ່ຍິງທີ່ໄດ້ຮັບຄວາມເສຍຫາຍຈາກການຄ້າມະນຸດ, ການໃຊ້ຄວາມຮຸນແຮງ, ໄພພິບັດ, ພະຍາດລະບາດ, ສົງຄາມ;
2. **ແມ່ຍິງຖືກປະລະ** ໝາຍເຖິງ ແມ່ຍິງທີ່ຂາດການເອົາໃຈໃສ່ໃນການ ເບິ່ງແຍງ ລ້ຽງດູ, ສຶກສາອົບຮົມ, ສົ່ງເສີມຄວາມກ້າວໜ້າ ແລະ ສິ່ງຈຳເປັນໃນການດຳລົງຊີວິດ ເປັນຕົ້ນ ດ້ານສຸຂະພາບ, ອາຫານ, ເຄື່ອງນຸ່ງຫົ່ມ, ທີ່ຢູ່ອາໄສທີ່ປອດໄພ, ການສຶກສາ ແລະ ຄວາມອົບອຸ່ນດ້ານຈິດໃຈ;

3. **ແມ່ຍິງຖືກປະຖິ້ມ** ໝາຍເຖິງ ແມ່ຍິງທີ່ຖືກ ພໍ່, ແມ່, ຄອບຄົວ ແລະ ຍາດພີ່ນ້ອງ ບໍ່ສົນໃຈ, ບໍ່ຫວ່ງໃຍ ແລະ ບໍ່ຍອມຮັບເປັນສະມາຊິກໃນຄອບຄົວ;

4. **ແມ່ຍິງພິການ** ໝາຍເຖິງ ແມ່ຍິງທີ່ມີຄວາມບົກພ່ອງທາງດ້ານ ຮ່າງກາຍ, ການເບິ່ງເຫັນ, ການໄດ້ຍິນ ຫຼື ການປາກເວົ້າ, ສະຕິປັນຍາ, ຄວາມຈື່ຈຳ ແລະ ດ້ານອື່ນ ບວກກັບສິ່ງກີດຂວາງ ຊຶ່ງເປັນອຸປະສັກໃນການເຄື່ອນໄຫວຊີວິດປະຈຳວັນ, ການຮຽນຮູ້ ແລະ ການເຂົ້າຮ່ວມ ກິດຈະກຳທາງສັງຄົມໄດ້ຢ່າງເຕັມສ່ວນ;

5. **ແມ່ຍິງດ້ອຍໂອກາດ** ໝາຍເຖິງ ແມ່ຍິງທີ່ຂາດເງື່ອນໄຂອັນຈຳເປັນໃນການຕອບສະໜອງ ຫຼື ອຳນວຍຄວາມສະດວກແກ່ການພັດທະນາຄວາມຮູ້ ຄວາມສາມາດ;

6. **ແມ່ຍິງຖືກທາລຸນທາງດ້ານຈິດໃຈ** ໝາຍເຖິງ ແມ່ຍິງ ທີ່ໄດ້ຮັບຜົນກະທົບທາງດ້ານຈິດໃຈຈາກການ ຈຳແນກ, ແບ່ງແຍກ, ກີດກັ້ນ, ຖືກດູຖູກ, ໝິ່ນປະໝາດ, ກັກຂັງ, ໝ່ອງໜ່ຽວ, ໃສ່ຮ້າຍ, ປ້ອຍດ່າ, ປະຈານ, ບັງຄັບ, ນາບຂູ່, ເຢາະເຢີ້ຍ, ສຽດສີ, ເມີນເສີຍ ຫຼື ລະເລີຍ ຊຶ່ງເຮັດໃຫ້ເສື່ອມເສຍຊື່ສຽງ, ກຽດສັກສີ, ອັບອາຍ, ຂາດຄວາມເຊື່ອໝັ້ນ, ເສຍສຸຂະພາບຈິດ, ຊຶມເສົ້າ ຫຼື ຂ້າຕົວຕາຍ;

7. **ແມ່ຍິງຖືກທາລຸນທາງເພດ** ໝາຍເຖິງ ແມ່ຍິງທີ່ຖືກ ຂົ່ມຂືນທຳຊຳເລົາ, ທຳຊຳເລົາ, ບັງຄັບ ຮ່ວມເພດ, ທຳລາມົກ ຫຼື ອະນາຈານ, ທຳອະນາຈານ, ກະທຳທີ່ຫຍາບຊ້າທາງເພດ, ເວົ້າຈາ ຫຼື ສຳຜັດໃນລັກສະນະທາງເພດ ຊຶ່ງບໍ່ເປັນທີ່ຕ້ອງການຂອງຜູ້ຮັບຟັງ ຫຼື ຜູ້ຖືກສຳຜັດ ຫຼື ສົ່ງຜູ້ຍິງ ຫຼື ເດັກ ໃຫ້ບຸກຄົນອື່ນ ເພື່ອເປົ້າໝາຍທາງເພດ;

8. **ແມ່ຍິງຖືກທຳຮ້າຍຮ່າງກາຍ** ໝາຍເຖິງ ແມ່ຍິງທີ່ຖືກ ທຸບຕີ, ທໍລະມານ, ຂ້ຽນຕີ, ແທງ, ເຕະ, ຊຸກ, ຍູ້, ໂຍນຖິ້ມ ຊຶ່ງພາໃຫ້ໄດ້ຮັບບາດເຈັບ, ພິການ, ເປັນບ້າເສຍຈິດ, ເສຍອົງຄະ ຫຼື ເສຍຊີວິດ;

9. **ແມ່ຍິງເປັນບ້າເສຍຈິດ** ໝາຍເຖິງ ແມ່ຍິງທີ່ຂາດສະຕິສຳປະຊັນຍະ ບໍ່ສາມາດຄວບຄຸມຕົນເອງໄດ້, ບໍ່ຮູ້ຖືກ ຮູ້ຜິດ;

10. **ແມ່ຍິງຖືກຂູດຮີດແຮງງານ** ໝາຍເຖິງ ແມ່ຍິງທີ່ຖືກບັງຄັບໃຫ້ອອກແຮງງານ, ເຮັດວຽກເກີນກຳລັງ ຫຼື ເກີນເວລາ ໂດຍບໍ່ໄດ້ຮັບຄ່າຕອບແທນ ຫຼື ໄດ້ຮັບຄ່າຕອບແທນທີ່ບໍ່ເໝາະສົມ;

11. **ແມ່ຍິງຕິດຢາເສບຕິດ** ໝາຍເຖິງ ແມ່ຍິງທີ່ໃຊ້ສານກະຕຸ້ນ ຫຼື ລະງັບລະບົບປະສາດ ທີ່ໄດ້ມາຈາກພືດທີ່ໃຫ້ສານເສບຕິດ ຫຼື ຈາກສານເຄມີສັງເຄາະ ຊຶ່ງມີຜົນກະທົບຢ່າງຮຸນແຮງຕໍ່ຮ່າງກາຍ, ຈິດປະສາດ ແລະ ກະຕຸ້ນໃຫ້ມີຄວາມຕ້ອງການເສບເພີ່ມຂຶ້ນເລື້ອຍໆ;

12. **ແມ່ຍິງຕິດເຊື້ອພະຍາດຮ້າຍແຮງ** ໝາຍເຖິງ ແມ່ຍິງທີ່ຕິດເຊື້ອພະຍາດທີ່ບໍ່ສາມາດປິ່ນປົວໃຫ້ຫາຍດີໄດ້;

13. **ແມ່ຍິງປ່ຽວພອຍອະນາຖາ** ໝາຍເຖິງ ແມ່ຍິງທີ່ທຸກຍາກຂາດເຂີນທາງດ້ານວັດຖຸ, ຂາດຄວາມອົບອຸ່ນທາງດ້ານຈິດໃຈ ແລະ ບໍ່ມີຜູ້ເບິ່ງແຍງ ລ້ຽງດູ;

14. **ແມ່ຍິງເປັນຜູ້ຖືກເສຍຫາຍໃນຂະບວນການດຳເນີນຄະດີ** ໝາຍເຖິງ ແມ່ຍິງທີ່ບໍ່ໄດ້ຮັບຄວາມເປັນທຳຈາກທຸກຂັ້ນຕອນຂອງການດຳເນີນຄະດີ, ໄດ້ຮັບຄວາມເສຍຫາຍທາງດ້ານຊັບສິນ, ເງິນຄຳ ແລະ ກຽດສັກສີ;

15. **ແມ່ຍິງກະທຳຜິດໃນເວລາຖືພາ** ໝາຍເຖິງ ແມ່ຍິງທີ່ມີພຶດຕິກຳຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ ຊຶ່ງແມ່ຍິງດັ່ງກ່າວ ກຳລັງຖືພາ ຫຼື ມີລູກອາຍຸບໍ່ເຖິງໜຶ່ງປີ ໃນເວລາກະທຳຜິດ;

16. **ຂົງເຂດວຽກງານທາງດ້ານວັດທະນະທຳ-ສັງຄົມ** ໝາຍເຖິງ ວຽກງານ ສຶກສາທິການ ແລະ ກິລາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

17. **ການຈຳແນກ** ໝາຍເຖິງ ການແບ່ງແຍກ, ກີດກັນ, ຈຳກັດການເຂົ້າຮ່ວມ, ເລືອກປະຕິບັດ, ການປະຕິເສດ, ບໍ່ຍອມຮັບ ຫຼື ບໍ່ຖືສຳຄັນ ບົດບາດ, ລັກສະນະຂອງ ແມ່ຍິງ.

**ມາດຕາ 4 (ປັບປຸງ) ບົດບາດຂອງແມ່ຍິງ**

ແມ່ຍິງ ໄດ້ຮ່ວມກັບເພດຊາຍໃນການຕໍ່ສູ້ ແລະ ເສຍສະລະໃນພາລະກິດຕໍ່ສູ້ ເພື່ອຄວາມເປັນເອກະລາດແຫ່ງຊາດ.

ແມ່ຍິງ ມີບົດບາດໃນຂົງເຂດວຽກງານທາງດ້ານ ການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ການອະນຸລັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະ ເອກະລັກຂອງແມ່ຍິງລາວ.

ແມ່ຍິງ ມີບົດບາດຮ່ວມກັບຄອບຄົວໃນການພັດທະນາ, ເບິ່ງແຍງ, ລ້ຽງດູ ແລະ ສຶກສາອົບຮົມສະມາຊິກໃນຄອບຄົວໃຫ້ເປັນພົນລະເມືອງດີຂອງຊາດ.

**ມາດຕາ 5 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ**

ລັດ ໃຫ້ບຸລິມະສິດ ແລະ ຖືສຳຄັນ ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ດ້ວຍການ ກຳນົດນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ ເພື່ອຊຸກຍູ້, ສົ່ງເສີມ ວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ສົ່ງເສີມຄວາມກ້າວໜ້າ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ດ້ວຍການສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແມ່ຍິງມີສຸຂະພາບດີ, ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທຳ ປະຕິວັດ, ມີວຽກເຮັດງານທຳ ແລະ ມີສິດເທົ່າທຽມກັບເພດຊາຍ ໂດຍບໍ່ຈຳແນກຖານະທາງດ້ານ ການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ.

ລັດ ຊຸກຍູ້, ປຸກລະດົມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກ ລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ລວມທັງສັງຄົມໃຫ້ມີສ່ວນຮ່ວມ, ສະໜັບສະໜູນ ແລະ ປະກອບສ່ວນດ້ານທຶນ, ເຕັກນິກວິຊາການເຂົ້າໃນວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ.

**ມາດຕາ 6 (ໃໝ່) ຫຼັກການກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ**

ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ ແລະ ແຜນດຳເນີນງານແຫ່ງຊາດ ໃນແຕ່ລະໄລຍະ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ, ເຄົາລົບສິດ, ຜົນປະໂຫຍດອັນຊອບທຳ ຂອງແມ່ຍິງ;
3. ຖືສຳຄັນ, ຄົ້ນຄວ້າ ແລະ ພິຈາລະນາ ຄວາມຄິດເຫັນຂອງແມ່ຍິງ ກ່ຽວກັບການພັດທະນາ ແລະ ປົກປ້ອງແມ່ຍິງ;
4. ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ທຸກພາກສ່ວນໃນສັງຄົມ ໃຫ້ມີສ່ວນຮ່ວມໃນການພັດທະນາ ແລະ ປົກປ້ອງແມ່ຍິງ;
5. ປະຕິບັດສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 7 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ຢູ່ ສປປ ລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ການຝຶກອົບຮົມ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ ແລະ ການຮ່ວມມືອື່ນ ໃນການພັດທະນາ ແລະ ປົກປ້ອງ ແມ່ຍິງ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ການພັດທະນາແມ່ຍິງ

**ມາດຕາ 9 (ປັບປຸງ) ການພັດທະນາແມ່ຍິງ**

ການພັດທະນາແມ່ຍິງ ແມ່ນ ວຽກງານໜຶ່ງຂອງການພັດທະນາຊັບພະຍາກອນມະນຸດ ດ້ວຍການນໍາໃຊ້ຮູບການ, ວິທີການ ແລະ ມາດຕະການຕ່າງໆ ເພື່ອເຮັດໃຫ້ແມ່ຍິງມີ ຄຸນສົມບັດສິນທໍາປະຕິວັດ, ຄວາມຮູ້, ຄວາມສາມາດ ແລະ ສຸຂະພາບດີ.

ການພັດທະນາແມ່ຍິງ ມີຄວາມສໍາຄັນ ແລະ ຈໍາເປັນ ເພື່ອໃຫ້ແມ່ຍິງສາມາດເຂົ້າຮ່ວມໃນຂົງເຂດວຽກງານທາງດ້ານ ການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 10 (ປັບປຸງ) ເນື້ອໃນການພັດທະນາແມ່ຍິງ**

ການພັດທະນາແມ່ຍິງ ມີເນື້ອໃນ ດັ່ງນີ້:

1. ການພັດທະນາທາງດ້ານຮ່າງກາຍ;
2. ການພັດທະນາທາງດ້ານແນວຄິດຈິດໃຈ;
3. ການພັດທະນາທາງດ້ານວັດທະນະທໍາ;
4. ການພັດທະນາທາງດ້ານການສຶກສາ ແລະ ກິລາ;
5. ການພັດທະນາທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ;
6. ການພັດທະນາທາງດ້ານວິຊາຊີບ ແລະ ສີມືແຮງງານ;
7. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈໍາເປັນ.

**ມາດຕາ 11 ການພັດທະນາທາງດ້ານຮ່າງກາຍ**

ການພັດທະນາທາງດ້ານຮ່າງກາຍ ແມ່ນ ການສົ່ງເສີມໃຫ້ແມ່ຍິງມີການຈະເລີນເຕີບໂຕ ທາງດ້ານຮ່າງກາຍຢ່າງສົມບູນ, ມີສຸຂະພາບດີ, ມັນສະໝອງດີ, ມີຄຸນນະພາບຊີວິດທີ່ດີ ແລະ ມີອາຍຸຍືນ.

**ມາດຕາ 12 (ປັບປຸງ) ການພັດທະນາທາງດ້ານແນວຄິດຈິດໃຈ**

ການພັດທະນາທາງດ້ານແນວຄິດຈິດໃຈ ແມ່ນ ການສົ່ງເສີມໃຫ້ແມ່ຍິງ ມີສຸຂະພາບຈິດທີ່ດີ, ມີຈິດໃຈເຂັ້ມແຂງ, ທັດສະນະຫຼັກໝັ້ນໜັກແໜ້ນ, ມີອຸດົມການ, ຄຸນສົມບັດສິນທໍາປະຕິວັດ, ມີກິລິຍາມາລະຍາດທີ່ດີ ພ້ອມກັບສະມາຊິກໃນຄອບຄົວຂອງຕົນ ສ້າງສັງຄົມ ແລະ ຄອບຄົວໃຫ້ ຮັ່ງມີ, ຜາສຸກ ແລະ ກ້າວໜ້າ.

**ມາດຕາ 13 (ໃໝ່) ການພັດທະນາທາງດ້ານວັດທະນະທໍາ**

ການພັດທະນາທາງດ້ານວັດທະນະທໍາ ແມ່ນ ການສົ່ງເສີມໃຫ້ແມ່ຍິງ ມີສ່ວນຮ່ວມໃນການອະນຸລັກ ແລະ ສົ່ງເສີມ ມູນເຊື້ອດຸໝັ່ນຂະຫຍັນພຽນ, ຮີດຄອງປະເພນີ, ວັດທະນະທໍາອັນດີງາມຂອງຊາດ ແລະ ຂອງເຜົ່າ, ເສດຖະ

ກິດພູມປັນຍາ, ສີໄມ້ລາຍມື ແລະ ການເຄື່ອນໄຫວວັດທະນະທຳທີ່ເປັນເອກະລັກ, ສິລະປະວັນນະຄະດີ, ການປະດິດຄິດແຕ່ງ, ປົກປັກຮັກສາມໍລະດົກທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ສົມທົບກັບການຮັບເອົາວັດທະນະທຳທີ່ກ້າວໜ້າຂອງມວນມະນຸດ ຢ່າງມີການເລືອກເຟັ້ນ.

**ມາດຕາ 14 (ປັບປຸງ) ການພັດທະນາທາງດ້ານການສຶກສາ ແລະ ກິລາ**

ການພັດທະນາທາງດ້ານການສຶກສາ ແລະ ກິລາ ແມ່ນ ການສ້າງເງື່ອນໄຂ ໃຫ້ແມ່ຍິງໄດ້ຮັບການສຶກສາຢ່າງທົ່ວເຖິງ, ການສຶກສາທາງດ້ານວິທະຍາສາດທຳມະຊາດ ແລະ ສັງຄົມໃຫ້ສູງຂຶ້ນ, ເຂົ້າຮ່ວມໃນກິດຈະກຳກິລາ-ກາຍຍະກຳ ແນໃສ່ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ແມ່ຍິງຢ່າງຮອບດ້ານ, ສົ່ງເສີມ ຜູ້ມີພອນສະຫວັນ ແລະ ຜູ້ຮຽນເກັ່ງ.

**ມາດຕາ 15 (ໃໝ່) ການພັດທະນາທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ**

ການພັດທະນາທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ແມ່ນ ການສ້າງເງື່ອນໄຂໃຫ້ແມ່ຍິງ ໄດ້ເຂົ້າຮ່ວມໃນການຄົ້ນຄວ້າ, ປະດິດສ້າງ, ພັດທະນາຜະລິດຕະພັນ ທີ່ມີຄຸນນະພາບສູງໃນຮູບແບບໃໝ່ອອກສູ່ສັງຄົມ, ນຳໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ລວມທັງການເຂົ້າເຖິງ ຂໍ້ມູນ ຂ່າວສານ ທີ່ເປັນປະໂຫຍດ.

**ມາດຕາ 16 (ປັບປຸງ) ການພັດທະນາທາງດ້ານວິຊາຊີບ ແລະ ສີມືແຮງງານ**

ການພັດທະນາທາງດ້ານວິຊາຊີບ ແລະ ສີມືແຮງງານ ແມ່ນ ການສ້າງເງື່ອນໄຂໃຫ້ແມ່ຍິງ ໄດ້ຮັບການຝຶກອົບຮົມດ້ານວິຊາຊີບ, ການພັດທະນາສີມືແຮງງານ ແລະ ມີ ປະສົບການ, ວິໄນແຮງງານ ເພື່ອໃຫ້ແມ່ຍິງໄດ້ມີວຽກເຮັດງານທຳທີ່ໝັ້ນຄົງ.

## ພາກທີ III
## ການປົກປ້ອງແມ່ຍິງ

**ມາດຕາ 17 (ໃໝ່) ການປົກປ້ອງແມ່ຍິງ**

ການປົກປ້ອງແມ່ຍິງ ມີເນື້ອໃນ ດັ່ງນີ້:

1. ຄວາມສະເໝີພາບຍິງ-ຊາຍ;
2. ການປົກປ້ອງສິດ, ຜົນປະໂຫຍດ ແລະ ພັນທະຂອງແມ່ຍິງ;
3. ການປົກປ້ອງແມ່ຍິງທີ່ຕ້ອງປົກປ້ອງພິເສດ;
4. ການຊ່ວຍເຫຼືອແມ່ຍິງທີ່ຕ້ອງປົກປ້ອງພິເສດ;
5. ຜົນກະທົບຕໍ່ແມ່ຍິງທີ່ຕ້ອງປົກປ້ອງພິເສດ.

### ໝວດທີ 1
### ຄວາມສະເໝີພາບຍິງ-ຊາຍ

**ມາດຕາ 18 (ປັບປຸງ) ຄວາມສະເໝີພາບຍິງ-ຊາຍ**

ຄວາມສະເໝີພາບຍິງ-ຊາຍ ແມ່ນ ຄວາມເທົ່າທຽມກັນທາງດ້ານສິດ, ຜົນປະໂຫຍດ, ຄວາມຮັບຜິດຊອບ, ການຕັດສິນບັນຫາ ແລະ ເຂົ້າເຖິງ ການພັດທະນາໃນທຸກຂົງເຂດວຽກງານ ຂອງສັງຄົມ ແລະ ຊີວິດ ຄອບຄົວຕາມກົດໝາຍ.

**ມາດຕາ 19 (ປັບປຸງ) ຄວາມສະເໝີພາບຍິງ-ຊາຍທາງດ້ານຕ່າງໆ**

ຄວາມສະເໝີພາບຍິງ-ຊາຍທາງດ້ານຕ່າງໆ ມີ ດັ່ງນີ້:

1. ຄວາມສະເໝີພາບທາງດ້ານ ການເມືອງ, ການປົກຄອງ;
2. ຄວາມສະເໝີພາບທາງດ້ານເສດຖະກິດ;
3. ຄວາມສະເໝີພາບທາງດ້ານວັດທະນະທຳ;
4. ຄວາມສະເໝີພາບທາງດ້ານການສຶກສາ ແລະ ກິລາ;
5. ຄວາມສະເໝີພາບທາງດ້ານສາທາລະນະສຸກ;
6. ຄວາມສະເໝີພາບທາງດ້ານ ແຮງງານ ແລະ ສະຫວັດດີການສັງຄົມ;
7. ຄວາມສະເໝີພາບທາງດ້ານ ວິທະຍາສາດ, ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ ແລະ ສິ່ງແວດລ້ອມ;
8. ຄວາມສະເໝີພາບທາງດ້ານ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
9. ຄວາມສະເໝີພາບທາງດ້ານການຕ່າງປະເທດ;
10. ຄວາມສະເໝີພາບໃນສາຍກ່ຽວພັນຄອບຄົວ;
11. ຄວາມສະເໝີພາບໃນການຮ້ອງທຸກ.

ເນື້ອໃນຄວາມສະເໝີພາບຍິງ-ຊາຍ ທາງດ້ານຕ່າງໆ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ.

## ໝວດທີ 2
## ການປົກປ້ອງສິດ, ຜົນປະໂຫຍດ ແລະ ພັນທະຂອງແມ່ຍິງ

**ມາດຕາ 20 (ໃໝ່) ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ**

ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແມ່ນ ການປ້ອງກັນ ແລະ ສະກັດກັ້ນ ການລະເມີດສິດ ແລະ ຜົນປະໂຫຍດຂອງແມ່ຍິງ ໃນຂົງເຂດແຮງງານ, ການຮັກສາສຸຂະພາບ, ສາຍພົວພັນຄອບຄົວ ແລະ ຂົງເຂດອື່ນ.

ແມ່ຍິງທີ່ຖືກລະເມີດ ມີສິດໄດ້ຮັບການປົກປ້ອງ ດ້ວຍການຮ້ອງທຸກ ແລະ ໄດ້ຮັບການແກ້ໄຂ ຕາມກົດໝາຍ.

**ມາດຕາ 21 (ປັບປຸງ) ສິດ ແລະ ຜົນປະໂຫຍດໃນຂົງເຂດແຮງງານ**

ແມ່ຍິງ ໄດ້ຮັບສິດ ແລະ ຜົນປະໂຫຍດໃນຂົງເຂດແຮງງານ ເປັນຕົ້ນ ການຮັບປະກັນເງື່ອນໄຂ ແລະ ສິ່ງແວດລ້ອມໃນການອອກແຮງງານທີ່ປອດໄພ, ສະຫວັດດີການ, ຄ່າຕອບແທນແຮງງານ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 (ປັບປຸງ) ສິດ ແລະ ຜົນປະໂຫຍດໃນການຮັກສາສຸຂະພາບ**

ລັດ ເອົາໃຈໃສ່ຮັກສາສຸຂະພາບຂອງແມ່ ແລະ ເດັກ, ຄອບຄົວມີພັນທະເບິ່ງແຍງແມ່ ແລະ ເດັກ ໃຫ້ມີສຸຂະພາບແຂງແຮງ ແລະ ສົມບູນດີ.

ແມ່ຍິງ ມີສິດໄດ້ຮັບ ຂໍ້ມູນ ຂ່າວສານ ແລະ ຄຳແນະນຳ ກ່ຽວກັບການ ອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ, ການຮັກສາສຸຂະພາບທີ່ເໝາະສົມ ແລະ ມີຄຸນນະພາບ, ໄດ້ຮັບການກວດສຸຂະພາບ, ການປິ່ນປົວ ແລະ ໃຫ້ວັກຊີນກັນພະຍາດ ຕາມກົດໝາຍ ເປັນຕົ້ນ ແມ່ຍິງໃນ ໄວເດັກ, ໄວໜຸ່ມ ແລະ ໄວຈະເລີນພັນ ລວມທັງແມ່ຍິງ ຢູ່ເຂດຫ່າງໄກສອກຫຼີກ.

ແມ່ຍິງ ມີສິດໄດ້ຮັບການບໍລິການທາງດ້ານສຸຂະພາບໃນເວລາຖືພາ ແລະ ຫຼັງອອກລູກ ຕາມກົດໝາຍ ເປັນຕົ້ນ ການກວດສຸຂະພາບ, ການຕິດຕາມຄວາມສ່ຽງຕ່າງໆທີ່ອາດຈະເກີດຂຶ້ນ, ການໃຫ້ການຊ່ວຍເຫຼືອ ແມ່ຍິງຖືພາ ແລະ ອອກລູກ.

ຂະແໜງການສາທາລະນະສຸກ ແລະ ການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ ຕ້ອງສະໜອງ ຂໍ້ມູນ ຂ່າວສານ ໃຫ້ແມ່ຍິງຖືພາ ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບການ ຮັກສາສຸຂະພາບ, ກວດສຸຂະພາບ, ໃຫ້ວັກຊີນກັນພະຍາດ ລວມທັງ ໂພຊະນາການ ເປັນຕົ້ນ ການກິນອາຫານທີ່ເປັນປະໂຫຍດ ແລະ ບໍ່ເປັນອັນຕະລາຍຕໍ່ສຸຂະພາບ ເພື່ອໃຫ້ເດັກເກີດມາ ມີຄວາມສົມບູນທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະໝອງ.

ໃນເວລາແມ່ຍິງອອກລູກນັ້ນ ໃຫ້ມີແພດ ຫຼື ພະຍາບານ ຊ່ວຍເບິ່ງແຍງ ແລະ ໃນເວລາເມຍ ອອກລູກ ຫຼື ເຈັບເປັນ ຜົວມີສິດຂໍລາພັກ ເພື່ອເບິ່ງແຍງສຸຂະພາບ ຂອງເມຍ ແລະ ລູກ.

ບໍ່ອະນຸຍາດໃຫ້ ບຸກຄົນ ຫຼື ການຈັດຕັ້ງ ບັງຄັບແມ່ຍິງຖືພາໄປອອກລູກຢູ່ປ່າ, ບ່ອນເປົ່າປ່ຽວ ຫຼື ບ່ອນບໍ່ຮັບປະກັນຄວາມປອດໄພຕໍ່ສຸຂະພາບ, ບໍ່ອະນຸຍາດ ໃຫ້ທຳຮ້າຍ ແມ່ຍິງ ແລະ ເດັກ ຍ້ອນຄວາມເຊື່ອຖືງົມງວາຍຂອງຕົນ ຫຼື ຍ້ອນສາເຫດອື່ນ.

### ມາດຕາ 23 (ປັບປຸງ) ສິດ ແລະ ຜົນປະໂຫຍດໃນສາຍພົວພັນຄອບຄົວ

ແມ່ຍິງ ໄດ້ຮັບສິດ ແລະ ຜົນປະໂຫຍດໃນຄອບຄົວ ດັ່ງນີ້:

1. ໃນເວລາເມຍຖືພາ ຫຼື ລູກມີອາຍຸບໍ່ຮອດ ໜຶ່ງປີ ຜົວບໍ່ມີສິດຂໍຢ່າຮ້າງ ແຕ່ເມຍມີສິດຂໍຢ່າຮ້າງໄດ້;

2. ໃນກໍລະນີມີການຢ່າຮ້າງ ເມຍມີບຸລິມະສິດ ໃນການສະເໜີເອົາລູກທີ່ມີອາຍຸຕໍ່າກວ່າ ເຈັດປີ ມາຢູ່ນໍາຕົນ;

3. ເມື່ອມີການຮ່ວມປະເວນີກັນ ຫຼື ມີລູກກ່ອນການແຕ່ງດອງ ຖ້າວ່າຊາຍຊູ້ຫາກບໍ່ເອົາຍິງຊູ້ເປັນເມຍ ຍິງຊູ້ ມີສິດຮຽກເອົາຄ່າເສຍຫາຍຈາກຊາຍຊູ້ ເປັນຕົ້ນ ຄ່າ ປົວແປງຈິດໃຈ, ອອກລູກ, ຫຼູລູກ, ຢູ່ກໍາ, ທໍາອູ່ສູ່ຂວັນ ແລະ ມີສິດຮ້ອງຂໍເອົາຄ່າລ້ຽງດູລູກຈົນເຖິງອາຍຸ ສິບແປດປີ;

4. ເມື່ອມີການແບ່ງປັນມູນມໍລະດົກ ແມ່ມີສິດຕາງໜ້າລູກທີ່ຢູ່ໃນທ້ອງໃນການສືບທອດ ແລະ ຄຸ້ມຄອງມູນມໍລະດົກ.

### ມາດຕາ 24 (ປັບປຸງ) ສິດ ແລະ ຜົນປະໂຫຍດທາງອາຍາ

ສິດ ແລະ ຜົນປະໂຫຍດຂອງແມ່ຍິງທາງອາຍາ ມີ ດັ່ງນີ້:

1. ແມ່ຍິງກະທໍາຜິດໃນເວລາຖືພາ ຫຼື ມີລູກອາຍຸບໍ່ເຖິງ ສາມປີ ຈະໄດ້ຮັບການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ;

2. ແມ່ຍິງຖືພາ ຫຼື ມີລູກອາຍຸບໍ່ເຖິງ ໜຶ່ງປີ ພາຍຫຼັງໄດ້ປະຕິບັດໂທດຕັດອິດສະລະພາບແລ້ວ ຈະບໍ່ຖືກໂທດຈໍາກັດທີ່ຢູ່ ຊຶ່ງເປັນໂທດເພີ່ມ;

3. ແມ່ຍິງກະທໍາຜິດໃນເວລາຖືພາ ຈະບໍ່ຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ;

4. ແມ່ຍິງທີ່ຖືກສານຕັດສິນລົງໂທດປະຫານຊີວິດ ຈະຖືກໂຈະການປະຕິບັດໂທດດັ່ງກ່າວໄວ້ຊົ່ວຄາວ ຖ້າຜູ້ກ່ຽວຫາກຖືພາ ຊຶ່ງລາຍລະອຽດໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 25 (ປັບປຸງ) ສິດໃນການຮ້ອງທຸກ

ໃນກໍລະນີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ຈໍາກັດ, ຂັດຂວາງ ຫຼື ລະເມີດສິດສະເໝີພາບຂອງແມ່ຍິງ ໃນຂົງເຂດການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ ຫຼື ສາຍພົວພັນຄອບຄົວ ແລະ ຂົງເຂດອື່ນ ແມ່ຍິງມີສິດສະເໜີ, ຮ້ອງຟ້ອງ, ຮ້ອງຂໍຄວາມເປັນທໍາ ຕໍ່ອົງການທີ່ກ່ຽວຂ້ອງຂອງລັດ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ.

ມາດຕາ 26 (ປັບປຸງ) ພັນທະຂອງແມ່ຍິງ

ແມ່ຍິງ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ລະບຽບການອອກແຮງງານ, ລະບຽບການດຳລົງຊີວິດ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ;

2. ປົກປັກຮັກສາປະເທດຊາດ ແລະ ປ້ອງກັນຄວາມສະຫງົບ, ປະຕິບັດພັນທະການທະຫານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ເສຍພາສີ ແລະ ອາກອນ ຕາມກົດໝາຍ;

4. ມີພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ການປົກປ້ອງແມ່ຍິງທີ່ຕ້ອງປົກປ້ອງພິເສດ

ມາດຕາ 27 (ໃໝ່) ການປົກປ້ອງແມ່ຍິງທີ່ຕ້ອງປົກປ້ອງພິເສດ

ແມ່ຍິງທີ່ຕ້ອງປົກປ້ອງພິເສດ ແມ່ນ ແມ່ຍິງ ຖືກເຄາະຮ້າຍ, ຖືກທາລຸນ ທາງຈິດໃຈ, ທາງເພດ, ຖືກທຳຮ້າຍຮ່າງກາຍ, ຖືກຂູດຮີດແຮງງານ, ຖືກປະລະ, ຖືກປະຖິ້ມ, ປ່ຽວພອຍອະນາຖາ, ພິການ, ດ້ອຍໂອກາດ, ຕິດຢາເສບຕິດ, ຕິດເຊື້ອພະຍາດຮ້າຍແຮງ, ເປັນບ້າເສຍຈິດ, ເປັນຜູ້ຖືກເສຍຫາຍໃນຂະບວນການດຳເນີນຄະດີ, ກະທຳຜິດໃນເວລາຖືພາ ຫຼື ມີລູກອາຍຸບໍ່ເຖິງ ໜຶ່ງປີ.

ການປົກປ້ອງແມ່ຍິງທີ່ຕ້ອງປົກປ້ອງພິເສດ ໃຫ້ນຳໃຊ້ ຮູບການ, ວິທີການ ແລະ ມາດຕະການ ເພື່ອຮັບປະກັນໃຫ້ແມ່ຍິງໄດ້ ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຕາມກົດໝາຍ.

ມາດຕາ 28 (ໃໝ່) ການປົກປ້ອງແມ່ຍິງຖືກເຄາະຮ້າຍ

ແມ່ຍິງຖືກເຄາະຮ້າຍ ລວມທັງແມ່ຍິງທີ່ຖືກທາລຸນທາງຈິດໃຈ, ທາງເພດ, ຖືກທຳຮ້າຍຮ່າງກາຍ ແລະ ຖືກຂູດຮີດແຮງງານ ຈະໄດ້ຮັບການ ປົກປ້ອງ ແລະ ຊ່ວຍເຫຼືອ ໃຫ້ມີສຸຂະພາບແຂງແຮງ ທາງດ້ານ ຮ່າງກາຍ, ຈິດໃຈ ແລະ ໄດ້ຮັບການສຶກສາ, ວິຊາຊີບ ເພື່ອໃຫ້ສາມາດດຳລົງຊີວິດໃນສັງຄົມ ຢ່າງປອດໄພ ແລະ ມີຄຸນນະພາບ.

ມາດຕາ 29 (ໃໝ່) ການປົກປ້ອງແມ່ຍິງຖືກປະລະ, ຖືກປະຖິ້ມ ແລະ ປ່ຽວພອຍອະນາຖາ

ແມ່ຍິງຖືກປະລະ, ຖືກປະຖິ້ມ ແລະ ປ່ຽວພອຍອະນາຖາ ຈະໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອໃນການຊອກຫາ ຄອບຄົວ, ຜູ້ປົກຄອງ, ຍາດພີ່ນ້ອງ, ສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ, ທີ່ຢູ່, ການສຶກສາ, ວິຊາຊີບ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 30 (ໃໝ່) ການປົກປ້ອງແມ່ຍິງພິການ ແລະ ດ້ອຍໂອກາດ

ແມ່ຍິງພິການ ແລະ ດ້ອຍໂອກາດ ຈະໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອ ໂດຍບໍ່ຖືກຈຳແນກ ໃນການເຂົ້າເຖິງ ການພັດທະນາ, ຂໍ້ມູນ ຂ່າວສານ, ແຫຼ່ງທຶນ ເພື່ອປະກອບອາຊີບຢ່າງເໝາະສົມ ແລະ ສາມາດດຳລົງຊີວິດໃນສັງຄົມ.

ມາດຕາ 31 (ໃໝ່) ການປົກປ້ອງແມ່ຍິງ ຕິດຢາເສບຕິດ, ຕິດເຊື້ອພະຍາດຮ້າຍແຮງ ແລະ ເປັນບ້າເສຍຈິດ

ແມ່ຍິງ ຕິດຢາເສບຕິດ, ຕິດເຊື້ອພະຍາດຮ້າຍແຮງ ແລະ ເປັນບ້າເສຍຈິດ ຈະໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອ ໃນການບຳບັດຟື້ນຟູ, ການໃຫ້ຄຳປຶກສາ, ການກວດ ແລະ ປິ່ນປົວ, ການເບິ່ງແຍງດູແລ, ທີ່ຢູ່ອາໄສ, ການສຶກສາ, ການປະກອບອາຊີບ ເພື່ອສາມາດດຳລົງຊີວິດໃນສັງຄົມ.

**ມາດຕາ 32 (ໃໝ່) ການປົກປ້ອງແມ່ຍິງຜູ້ຖືກເສຍຫາຍໃນຂະບວນການດຳເນີນຄະດີ**

ແມ່ຍິງຜູ້ຖືກເສຍຫາຍໃນຂະບວນການດຳເນີນຄະດີ ຈະໄດ້ຮັບ ການປົກປ້ອງ ແລະ ຊ່ວຍເຫຼືອໃນການໃຫ້ຄຳປຶກສາ, ສະໜອງ ຂໍ້ມູນ ຂ່າວສານ, ການຮ່າງເອກະສານ ແລະ ການຈັດຫາຜູ້ຕາງໜ້າໃນການດຳເນີນຄະດີ.

**ມາດຕາ 33 (ໃໝ່) ການປົກປ້ອງແມ່ຍິງກະທຳຜິດໃນເວລາຖືພາ ຫຼື ມີລູກອາຍຸບໍ່ເຖິງ ໜຶ່ງປີ**

ແມ່ຍິງກະທຳຜິດໃນເວລາ ຖືພາ ຫຼື ມີລູກອາຍຸບໍ່ເຖິງ ໜຶ່ງປີ ຈະໄດ້ຮັບການປົກປ້ອງ ໃນການໂຈະການປະຕິບັດໂທດຕັດອິດສະລະພາບ ຕໍ່ຜູ້ເປັນແມ່, ສຳລັບລູກນັ້ນ ຈະໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອ ຕາມກົດໝາຍ.

ແມ່ຍິງກະທຳຜິດໃນເວລາ ຖືພາ ຫຼື ມີລູກອາຍຸບໍ່ເຖິງ ແປດປີ ຈະບໍ່ຖືກລົງໂທດຈຳກັດທີ່ຢູ່.

**ມາດຕາ 34 (ໃໝ່) ການກຳນົດຮູບການ, ວິທີການ ແລະ ມາດຕະການ ປົກປ້ອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກໄດ້ຮູ້, ໄດ້ເຫັນ ການກະທຳທີ່ເປັນການລະເມີດສິດ ແລະ ຜົນປະໂຫຍດຂອງແມ່ຍິງທີ່ຕ້ອງປົກປ້ອງພິເສດນັ້ນ ຕ້ອງແຈ້ງ ຫຼື ລາຍງານຕໍ່ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍດ່ວນ.

ພາຍຫຼັງໄດ້ພົບເຫັນ ຫຼື ຮັບລາຍງານວ່າ ມີແມ່ຍິງທີ່ຕ້ອງປົກປ້ອງພິເສດໄດ້ຖືກລະເມີດນັ້ນແລ້ວ ການຈັດຕັ້ງ ຫຼື ພາກສ່ວນທີ່ກ່ຽວຂ້ອງ ຕ້ອງວາງແຜນການ, ກຳນົດ ຮູບການ, ວິທີການ, ມາດຕະການ ປົກປ້ອງ ແລະ ຊ່ວຍເຫຼືອ ຕາມກົດໝາຍ.

**ມາດຕາ 35 (ໃໝ່) ການປົກປ້ອງຮີບດ່ວນ**

ເມື່ອໄດ້ພົບເຫັນ ຫຼື ຮັບລາຍງານວ່າ ມີແມ່ຍິງທີ່ຕ້ອງປົກປ້ອງພິເສດ ໄດ້ຖືກລະເມີດສິດ ແລະ ຜົນປະໂຫຍດແລ້ວ ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງກອບກູ້ ແລະ ຊ່ວຍເຫຼືອ ຜູ້ກ່ຽວອອກຈາກໄພອັນຕະລາຍ ໂດຍມີການປົກປ້ອງຮີບດ່ວນ ດັ່ງນີ້:

1. ກວດກາສະຖານທີ່ ທີ່ສົງໄສວ່າມີແມ່ຍິງທີ່ຕ້ອງປົກປ້ອງພິເສດ;
2. ເອົາແມ່ຍິງອອກຈາກການຄຸ້ມຄອງຂອງ ຄອບຄົວ ຫຼື ບ່ອນເກີດເຫດ ແລ້ວນຳໄປຢູ່ທີ່ພັກເຊົາຊົ່ວຄາວ ທີ່ປອດໄພ ຫຼື ສູນສົງເຄາະ;
3. ເອົາແມ່ຍິງໄປ ກວດ, ປິ່ນປົວ ຫຼື ຟື້ນຟູ ສຸຂະພາບ ຕາມແຕ່ລະກໍລະນີ;
4. ນຳໃຊ້ມາດຕະການອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

## ໝວດທີ 4
## ການຊ່ວຍເຫຼືອແມ່ຍິງທີ່ຕ້ອງປົກປ້ອງພິເສດ

**ມາດຕາ 36 (ໃໝ່) ການຊ່ວຍເຫຼືອແມ່ຍິງທີ່ຕ້ອງປົກປ້ອງພິເສດ**

ການຊ່ວຍເຫຼືອແມ່ຍິງທີ່ຕ້ອງປົກປ້ອງພິເສດ ແມ່ນ ການເຄື່ອນໄຫວ ຂອງບຸກຄົນ ແລະ ການຈັດຕັ້ງ ເພື່ອກອບກູ້ ແລະ ຊ່ວຍເຫຼືອ ແມ່ຍິງໃຫ້ມີຄວາມປອດໄພ ທັງຕອບສະໜອງສິ່ງຈຳເປັນສຳລັບການດຳລົງຊີວິດ.

ແມ່ຍິງທີ່ຕ້ອງປົກປ້ອງພິເສດ ຈະໄດ້ຮັບການຊ່ວຍເຫຼືອດ້ານຕ່າງໆ ດັ່ງນີ້:

1. ການຊ່ວຍເຫຼືອດ້ານທີ່ພັກເຊົາຊົ່ວຄາວທີ່ປອດໄພ;
2. ການຊ່ວຍເຫຼືອດ້ານສັງຄົມສົງເຄາະ;
3. ການຊ່ວຍເຫຼືອດ້ານການໃຫ້ຄຳປຶກສາ;
4. ການຊ່ວຍເຫຼືອດ້ານກົດໝາຍ;
5. ການຊ່ວຍເຫຼືອດ້ານການແພດ;

6. ການຊ່ວຍເຫຼືອດ້ານ ການສຶກສາ ແລະ ຝຶກອົບຮົມວິຊາຊີບ;
7. ການຊ່ວຍເຫຼືອດ້ານເສດຖະກິດ;
8. ການຊ່ວຍເຫຼືອການກັບຄືນສູ່ຄອບຄົວ ແລະ ສັງຄົມ.

ການຊ່ວຍເຫຼືອດັ່ງກ່າວໃຫ້ແມ່ຍິງທີ່ຕ້ອງປົກປ້ອງພິເສດ ໃຫ້ອີງຕາມແຕ່ລະກໍລະນີ.

ສໍາລັບການຊ່ວຍເຫຼືອ ແມ່ຍິງຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ, ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

**ມາດຕາ 37 (ໃໝ່) ການຊ່ວຍເຫຼືອດ້ານທີ່ພັກເຊົາຊົ່ວຄາວທີ່ປອດໄພ**

ແມ່ຍິງທີ່ຕ້ອງປົກປ້ອງພິເສດ ໄດ້ຮັບການຊ່ວຍເຫຼືອດ້ານທີ່ພັກເຊົາຊົ່ວຄາວທີ່ປອດໄພ ລວມທັງອາຫານ, ຢາປົວພະຍາດ, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ອັນຈໍາເປັນໃນການດໍາລົງຊີວິດ.

**ມາດຕາ 38 (ໃໝ່) ການຊ່ວຍເຫຼືອດ້ານສັງຄົມສົງເຄາະ**

ແມ່ຍິງທີ່ຕ້ອງປົກປ້ອງພິເສດ ໄດ້ຮັບການຊ່ວຍເຫຼືອຂັ້ນພື້ນຖານ ໃນການບໍລິການດ້ານອຸປະໂພກ, ບໍລິໂພກ, ທີ່ຢູ່ອາໄສ ເພື່ອສາມາດແກ້ໄຂຊີວິດການເປັນຢູ່ ດ້ວຍການປະເມີນສະພາບຄວາມສ່ຽງ, ການພັດທະນາ, ການເຂົ້າຮ່ວມໃນການສໍາພາດ, ການໃຫ້ການ ແລະ ການໄກ່ເກ່ຍ.

**ມາດຕາ 39 (ໃໝ່) ການຊ່ວຍເຫຼືອດ້ານການໃຫ້ຄໍາປຶກສາ**

ແມ່ຍິງທີ່ຕ້ອງປົກປ້ອງພິເສດ ໄດ້ຮັບການຊ່ວຍເຫຼືອດ້ານການໃຫ້ຄໍາປຶກສາ ເປັນຕົ້ນ ທາງດ້ານ ຈິດໃຈ, ກົດໝາຍ, ສຸຂະພາບ, ການສຶກສາ ລວມທັງໄດ້ຮັບ ຂໍ້ມູນ ຂ່າວສານ ກ່ຽວກັບສິດຂອງຕົນ.

**ມາດຕາ 40 (ໃໝ່) ການຊ່ວຍເຫຼືອດ້ານກົດໝາຍ**

ແມ່ຍິງທີ່ຕ້ອງປົກປ້ອງພິເສດ ໄດ້ຮັບການຊ່ວຍເຫຼືອດ້ານກົດໝາຍ ເຊັ່ນ ຄໍາປຶກສາ, ຄໍາແນະນໍາ, ຂໍ້ມູນຂ່າວສານ, ການຮ່າງເອກະສານ, ມີທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ເປັນຕົວແທນໃນການຕໍ່ສູ້ຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ.

**ມາດຕາ 41 (ໃໝ່) ການຊ່ວຍເຫຼືອດ້ານການແພດ**

ແມ່ຍິງທີ່ຕ້ອງປົກປ້ອງພິເສດ ໄດ້ຮັບການຊ່ວຍເຫຼືອດ້ານການແພດ ເຊັ່ນ ຄໍາປຶກສາ, ຄໍາແນະນໍາດ້ານສຸຂະພາບຈິດ, ຈິດບໍາບັດ, ການກວດ, ປິ່ນປົວ, ຢັ້ງຢືນ ສຸຂະພາບ ແລະ ອາຍຸ.

**ມາດຕາ 42 (ໃໝ່) ການຊ່ວຍເຫຼືອດ້ານການສຶກສາ ແລະ ຝຶກອົບຮົມວິຊາຊີບ**

ແມ່ຍິງທີ່ຕ້ອງປົກປ້ອງພິເສດ ໄດ້ຮັບການຊ່ວຍເຫຼືອດ້ານການສຶກສາ ແລະ ຝຶກອົບຮົມວິຊາຊີບ ໃນການສຶກສາຮໍ່າຮຽນແຕ່ລະຊັ້ນ ແຕ່ລະສາຍ, ການຝຶກອົບຮົມວິຊາຊີບໃດໜຶ່ງ ເພື່ອໃຫ້ຜູ້ກ່ຽວມີວຽກເຮັດງານທໍາ, ມີລາຍຮັບ ແລະ ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ.

**ມາດຕາ 43 (ໃໝ່) ການຊ່ວຍເຫຼືອດ້ານເສດຖະກິດ**

ແມ່ຍິງທີ່ຕ້ອງປົກປ້ອງພິເສດ ໄດ້ຮັບການຊ່ວຍເຫຼືອດ້ານເສດຖະກິດເບື້ອງຕົ້ນ ເປັນຕົ້ນ ດ້ານການເງິນ, ການເຂົ້າເຖິງແຫຼ່ງທຶນ ຫຼື ການປະກອບອາຊີບໃດໜຶ່ງ ເພື່ອໃຫ້ຜູ້ກ່ຽວສາມາດຫາລ້ຽງຊີບກຸ້ມຕົນເອງ ທາງດ້ານເສດຖະກິດ.

ມາດຕາ 44 (ໃໝ່) ການຊ່ວຍເຫຼືອການກັບຄືນສູ່ຄອບຄົວ ແລະ ສັງຄົມ

ແມ່ຍິງທີ່ຕ້ອງປົກປ້ອງພິເສດ ໄດ້ຮັບການຊ່ວຍເຫຼືອການກັບຄືນສູ່ຄອບຄົວ ແລະ ສັງຄົມ ດ້ວຍການປະເມີນຄວາມພ້ອມກ່ອນກັບຄືນສູ່ຄອບຄົວ ແລະ ສັງຄົມ, ການຊອກຫາ ຄອບຄົວ, ທີ່ຢູ່, ຜູ້ປົກຄອງ, ຍາດພີ່ນ້ອງ, ການປະກອບອາຊີບ ແລະ ບ່ອນເຮັດວຽກ.

## ໝວດທີ 5
## ຜົນກະທົບຕໍ່ແມ່ຍິງທີ່ຕ້ອງປົກປ້ອງພິເສດ

ມາດຕາ 45 (ໃໝ່) ຜົນກະທົບຕໍ່ແມ່ຍິງທີ່ຕ້ອງປົກປ້ອງພິເສດ

ຜົນກະທົບຕໍ່ແມ່ຍິງທີ່ຕ້ອງປົກປ້ອງພິເສດ ມີ ດັ່ງນີ້:

1. ຜົນກະທົບຕໍ່ຮ່າງກາຍ;
2. ຜົນກະທົບຕໍ່ຈິດໃຈ;
3. ຜົນກະທົບທາງເພດ;
4. ຜົນກະທົບຕໍ່ ຊັບສິນ ຫຼື ເສດຖະກິດ.

ມາດຕາ 46 (ປັບປຸງ) ຜົນກະທົບຕໍ່ຮ່າງກາຍ

ຜົນກະທົບຕໍ່ຮ່າງກາຍ ແມ່ນ ຜົນກະທົບຕໍ່ພາຍໃນ ຫຼື ພາຍນອກຮ່າງກາຍ ຫຼື ມັນສະໝອງ ເປັນຕົ້ນ ການບາດເຈັບ, ບອບຊ້ຳ, ເສຍອົງຄະ, ພິການ, ເປັນບ້າ ຫຼື ເສຍຊີວິດ.

ມາດຕາ 47 (ປັບປຸງ) ຜົນກະທົບຕໍ່ຈິດໃຈ

ຜົນກະທົບຕໍ່ຈິດໃຈ ແມ່ນ ການປ່ຽນແປງດ້ານອາລົມ ເຊັ່ນ ກັງວົນ, ຫງຸດຫງິດ, ໃຈຮ້າຍ, ແຂງກະດ້າງ, ໂມໂຫ, ຊຶມເສົ້າ, ລະແວງສົງໄສ, ຢ້ານກົວ, ເຫັນພາບຫຼອກຫຼອນ, ຄວບຄຸມຕົນເອງບໍ່ໄດ້, ມີບັນຫາດ້ານການປັບຕົວ, ມີປົມດ້ອຍ, ຄິດວ່າຕົນເອງບໍ່ຄືໝູ່, ຮູ້ສຶກຜິດ, ບໍ່ມີຄຸນຄ່າ, ບໍ່ນັບຖືຕົນເອງ, ບໍ່ເປັນມິດກັບໃຜ, ມັກຢູ່ຄົນດຽວ, ແຍກຕົວອອກຈາກໝູ່ຄູ່, ຖືກປ່ອຍປະ, ຖືກຈຳແນກຈາກສັງຄົມ, ອັບອາຍ, ເສຍຈິດ, ເສຍໃຈ, ເສຍກຽດສັກສີ ແລະ ສູນເສຍຄວາມຊົງຈຳ ຊຶ່ງອາດນຳມາດ້ວຍການທຳຮ້າຍ ຄົນອື່ນ, ຕົນເອງ ຫຼື ຂ້າຕົວຕາຍ.

ມາດຕາ 48 (ປັບປຸງ) ຜົນກະທົບທາງເພດ

ຜົນກະທົບທາງເພດ ແມ່ນ ອະໄວຍະວະສືບພັນຖືກທຳລາຍ, ມີຄວາມສ່ຽງສູງຕໍ່ ການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ, ເຮສໄອວີ/ພະຍາດເອດ, ຖືພາໂດຍບໍ່ຕັ້ງໃຈ ແລະ ບໍ່ປອດໄພ, ມີພຶດຕິກຳທາງເພດທີ່ບໍ່ເໝາະສົມ, ການຈະເລີນເຕີບໂຕທາງຮ່າງກາຍ ແລະ ເພດ ຜິດປົກກະຕິ.

ມາດຕາ 49 (ປັບປຸງ) ຜົນກະທົບຕໍ່ຊັບສິນ ຫຼື ເສດຖະກິດ

ຜົນກະທົບຕໍ່ຊັບສິນ ຫຼື ເສດຖະກິດ ແມ່ນ ຄວາມເສຍຫາຍຕໍ່ຊັບສິນຂອງແມ່ຍິງ, ຄອບຄົວ, ເຮັດໃຫ້ເສຍອະນາຄົດ, ເສຍໂອກາດໃນການສ້າງລາຍໄດ້ ຫຼື ຜົນປະໂຫຍດອື່ນ ເປັນຕົ້ນ ການບໍ່ໄດ້ຮັບຄ່າແຮງງານ, ໄດ້ຮັບຄ່າແຮງງານບໍ່ສົມກັບການອອກແຮງງານ, ບໍ່ໄດ້ຮັບສະຫວັດດີການສັງຄົມ, ເຮັດໃຫ້ມີໜີ້ສິນ, ບໍ່ມີອາຊີບໝັ້ນຄົງ, ເຮັດໃຫ້ຂາດກຳລັງແຮງງານ ໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

# ພາກທີ IV
# ຄວາມຮັບຜິດຊອບຕໍ່ການພັດທະນາ ແລະ ປົກປ້ອງແມ່ຍິງ
## ໝວດທີ 1
## ຄວາມຮັບຜິດຊອບຕໍ່ການພັດທະນາ, ການປົກປ້ອງ ແລະ ຊ່ວຍເຫຼືອແມ່ຍິງ

### ມາດຕາ 50 (ໃໝ່) ຄວາມຮັບຜິດຊອບຕໍ່ການພັດທະນາ, ການປົກປ້ອງ ແລະ ຊ່ວຍເຫຼືອແມ່ຍິງ

ທຸກພາກສ່ວນໃນສັງຄົມ ມີຄວາມຮັບຜິດຊອບຕໍ່ການພັດທະນາ, ການປົກປ້ອງ ແລະ ຊ່ວຍເຫຼືອແມ່ຍິງ ດ້ວຍການສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແມ່ຍິງໄດ້ຮັບການພັດທະນາໃນທຸກດ້ານ, ໄດ້ຮັບການປົກປ້ອງສິດຜົນປະໂຫຍດອັນຊອບທຳ ແລະ ໄດ້ຮັບການຊ່ວຍເຫຼືອດ້ານຕ່າງໆ ຕາມກົດໝາຍ.

### ມາດຕາ 51 (ປັບປຸງ) ຄວາມຮັບຜິດຊອບຂອງລັດ

ລັດ ມີຄວາມຮັບຜິດຊອບໃນການວາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ, ຮູບການ, ວິທີການ ແລະ ມາດຕະການຕ່າງໆ ຢ່າງເປັນລະບົບກ່ຽວກັບການພັດທະນາ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ ໂດຍມອບໃຫ້ຂະແໜງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ.

ລັດ ສະໜອງງົບປະມານຕາມຄວາມເໝາະສົມ ເພື່ອຮັບໃຊ້ການເຄື່ອນໄຫວຂອງສະຫະພັນແມ່ຍິງລາວ, ອົງການ ແລະ ພາກສ່ວນອື່ນ ທີ່ເຮັດໜ້າທີ່ໃນການພັດທະນາ, ການປົກປ້ອງ ແລະ ຊ່ວຍເຫຼືອແມ່ຍິງ.

### ມາດຕາ 52 (ໃໝ່) ຄວາມຮັບຜິດຊອບຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບຕໍ່ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ໃນການພິຈາລະນາ, ຮັບຮອງເອົາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ການຄົ້ນຄວ້າ, ພິຈາລະນາຕົກລົງບັນຫາສຳຄັນກ່ຽວກັບແມ່ຍິງ, ຮັບ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ.

### ມາດຕາ 53 (ໃໝ່) ຄວາມຮັບຜິດຊອບຂອງສະຫະພັນແມ່ຍິງລາວ

ສະຫະພັນແມ່ຍິງລາວ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;
2. ເປັນເຈົ້າການສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ, ສົ່ງເສີມໃຫ້ແມ່ຍິງໄດ້ຮັບການພັດທະນາທາງດ້ານ ຮ່າງກາຍ, ຈິດໃຈ, ການສຶກສາ, ວິຊາຊີບ, ສີມືແຮງງານ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ, ຍົກລະດັບທາງດ້ານ ການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ;
3. ໃຫ້ຄຳປຶກສາ, ປົກປ້ອງແມ່ຍິງ ແລະ ຊ່ວຍເຫຼືອແມ່ຍິງທີ່ຕ້ອງປົກປ້ອງພິເສດ ຕາມກົດໝາຍ;
4. ເຊື່ອມທັດສະນະບົດບາດຍິງ-ຊາຍ ເຂົ້າໃນທຸກຂົງເຂດວຽກງານ, ມີ ຮູບການ ແລະ ວິທີການ ໃຫ້ພະນັກງານໃນແຕ່ລະຂົງເຂດ ໄດ້ຮັບການຝຶກອົບຮົມວຽກງານ ພັດທະນາ ແລະ ປົກປ້ອງແມ່ຍິງ, ສົ່ງເສີມຄວາມສະເໝີພາບ ຍິງ-ຊາຍ;
5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 (ໃໝ່) ຄວາມຮັບຜິດຊອບຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ມີຄວາມຮັບຜິດຊອບ ແລະ ເປັນເຈົ້າການຕໍ່ວຽກງານ ພັດທະນາ ແລະ ປົກປ້ອງແມ່ຍິງ ໂດຍຜ່ານ ຮູບການ, ວິທີການ ປະສານງານ ແລະ ຊີ້ນຳວຽກງານດັ່ງກ່າວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ດັ່ງນີ້:

1. ສ້າງແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ເພື່ອຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ໃຫ້ຄວາມຮູ້ ແລະ ສ້າງຄວາມເຂົ້າໃຈ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

3. ສ້າງຄວາມເຂັ້ມແຂງ ໃຫ້ກົມກອງ, ພະແນກການ ແລະ ໜ່ວຍງານ ໃນການຈັດຕັ້ງຂອງຕົນ ເພື່ອສາມາດຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

4. ໃຫ້ການຮ່ວມມື, ສະໜອງ ຂໍ້ມູນ ຂ່າວສານ ແລະ ປະສານສົມທົບກັບສະຫະພັນແມ່ຍິງ ຂັ້ນຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 (ປັບປຸງ) ຄວາມຮັບຜິດຊອບຂອງສັງຄົມ ແລະ ຊຸມຊົນ**

ສັງຄົມ ແລະ ຊຸມຊົນ ມີຄວາມຮັບຜິດຊອບຕໍ່ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ດັ່ງນີ້:

1. ສຶກສາອົບຮົມແມ່ຍິງ ໃຫ້ເຄົາລົບນັບຖື, ໃຫ້ກຽດຊຶ່ງກັນ ແລະ ກັນ, ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງຊາດ ແລະ ຂອງເຜົ່າ;

2. ເຂົ້າຮ່ວມໃນທຸກວຽກງານກ່ຽວກັບການພັດທະນາ ແລະ ປົກປ້ອງແມ່ຍິງ;

3. ມີສ່ວນຮ່ວມໃນການຊຸກຍູ້ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແມ່ຍິງ ໄດ້ຮັບການພັດທະນາຢ່າງຮອບດ້ານ, ເຂົ້າຮ່ວມທຸກການເຄື່ອນໄຫວໃນສັງຄົມ, ເຂົ້າຮ່ວມການປຶກສາຫາລື ແລະ ການຕັດສິນບັນຫາທີ່ສຳຄັນ ຂອງແມ່ຍິງ;

4. ຈຳກັດ ແລະ ລຶບລ້າງຄວາມເຊື່ອຖື ແລະ ຮີດຄອງປະເພນີ ທີ່ກີດໜ່ວງຄວາມກ້າວໜ້າ ຂອງແມ່ຍິງ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 (ປັບປຸງ) ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີຄວາມຮັບຜິດຊອບຕໍ່ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ ແລະ ໃຫ້ໂອກາດແກ່ສະມາຊິກໃນຄອບຄົວທີ່ເປັນເພດຍິງ ໃນການພັດທະນາຕົນເອງຢ່າງຮອບດ້ານ;

2. ໃຫ້ຄວາມສະເໝີພາບ, ປົກປ້ອງສິດ ແລະ ຜົນປະໂຫຍດດ້ານຕ່າງໆໃນຄອບຄົວ;

3. ໃຫ້ສະມາຊິກໃນຄອບຄົວທີ່ເປັນເພດຍິງ ໄດ້ເຂົ້າຮ່ວມໃນການປຶກສາຫາລື ແລະ ຕັດສິນໃຈຮ່ວມກັນໃນທຸກວຽກງານຂອງຄອບຄົວ;

4. ຈຳກັດ ແລະ ລຶບລ້າງຄວາມເຊື່ອຖື ແລະ ຮີດຄອງປະເພນີ ທີ່ກີດໜ່ວງຄວາມກ້າວໜ້າຂອງສະມາຊິກໃນຄອບຄົວທີ່ເປັນເພດຍິງ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57 (ປັບປຸງ) ຄວາມຮັບຜິດຊອບຂອງແມ່ຍິງ ແລະ ຜູ້ຊາຍ**

ແມ່ຍິງ ແລະ ຜູ້ຊາຍ ມີຄວາມຮັບຜິດຊອບຕໍ່ການພັດທະນາ ແລະ ປົກປ້ອງແມ່ຍິງ.

ແມ່ຍິງ ຕ້ອງເປັນເຈົ້າການໃນການພັດທະນາຕົນເອງ ທາງດ້ານຮ່າງກາຍ, ຈິດໃຈ, ການສຶກສາ, ວິຊາຊີບ ແລະ ສີມືແຮງງານ, ຍົກລະດັບຄວາມຮູ້ທາງດ້ານ ການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ. ນອກຈາກນີ້ ແມ່ຍິງ ຍັງຕ້ອງເປັນເຈົ້າການໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ມີສະຕິລະວັງຕົວ ບໍ່ໃຫ້ຕົກເປັນເຫຍື່ອຂອງໄພສັງຄົມ.

ຜູ້ຊາຍ ຕ້ອງໃຫ້ໂອກາດ, ສ້າງເງື່ອນໄຂ, ໃຫ້ການຍອມຮັບ, ຮັບຟັງຄຳເຫັນຂອງແມ່ຍິງ ບົນພື້ນຖານການຊຸກຍູ້ ສົ່ງເສີມ ຊຶ່ງກັນ ແລະ ກັນ ຢ່າງເທົ່າທຽມ.

## ໝວດທີ 2
## ຄວາມຮັບຜິດຊອບຕໍ່ການໃຫ້ຄຳປຶກສາແກ່ແມ່ຍິງ

**ມາດຕາ 58 (ໃໝ່) ການໃຫ້ຄຳປຶກສາ**

ການໃຫ້ຄຳປຶກສາ ແມ່ນ ຂະບວນການຊ່ວຍເຫຼືອແມ່ຍິງ ທີ່ມາຂໍຄຳປຶກສາ ຍ້ອນມີຄວາມທຸກໃຈ, ພົບອຸປະສັກ ຫຼື ມີບັນຫາໃນຊີວິດ ເພື່ອຊ່ວຍໃຫ້ຜູ້ກ່ຽວສາມາດເຫັນບັນຫາທີ່ເກີດຂຶ້ນ, ເຂົ້າໃຈຄວາມຮູ້ສຶກຂອງຕົນ ແລະ ຮູ້ຊອກຫາວິທີການແກ້ໄຂທີ່ຖືກຕ້ອງດ້ວຍຕົນເອງ.

ຜູ້ໃຫ້ຄຳປຶກສາ ເຮັດໜ້າທີ່ອະທິບາຍຊີ້ແຈງເຫດຜົນ, ຫຼຸດຜ່ອນລະດັບອາລົມ ແລະ ຄວາມຮູ້ສຶກທີ່ບໍ່ດີ, ຈັດລຳດັບທາງດ້ານຄວາມຄິດ, ຄວາມເຂົ້າໃຈ, ຊ່ວຍຊອກຫາທາງອອກທີ່ຖືກຕ້ອງ ຈົນເຮັດໃຫ້ຜູ້ມາຂໍຄຳປຶກສານັ້ນສາມາດພັດທະນາຕົນເອງທາງດ້ານ ຄວາມຄິດ, ສະຕິປັນຍາ, ມີການປັບຕົວ, ກ້າປະເຊີນໜ້າກັບບັນຫາ, ສາມາດດຳລົງຊີວິດຢູ່ໃນສະພາບຄວາມເປັນຈິງ ແລະ ຜ່ານວິກິດການໄປໄດ້.

ການໃຫ້ຄຳປຶກສາ ບໍ່ແມ່ນການອອກ ຄຳສັ່ງ, ຄຳແນະນຳ ຫຼື ບັງຄັບໃຫ້ຜູ້ມາຂໍຄຳປຶກສານັ້ນ ຕ້ອງປະຕິບັດຕາມຜູ້ໃຫ້ຄຳປຶກສາ ແລະ ບໍ່ແມ່ນການຕັດສິນໃຈແທນ ແຕ່ຫາກແມ່ນຜູ້ມາຂໍຄຳປຶກສາເອງເປັນຜູ້ຕັດສິນຕໍ່ທາງເລືອກ ແລະ ການແກ້ໄຂບັນຫາດ້ວຍຕົວຂອງຜູ້ກ່ຽວເອງ.

**ມາດຕາ 59 (ໃໝ່) ຄວາມຮັບຜິດຊອບຕໍ່ການໃຫ້ຄຳປຶກສາ**

ການໃຫ້ຄຳປຶກສາ ແມ່ນ ຄວາມຮັບຜິດຊອບຂອງສູນກາງສະຫະພັນແມ່ຍິງລາວ, ສະຫະພັນແມ່ຍິງຂັ້ນແຂວງ, ຂັ້ນເມືອງ, ຮາກຖານ ແລະ ພາກສ່ວນອື່ນ ທີ່ເຮັດໜ້າທີ່ໃນການປົກປ້ອງ ແລະ ຊ່ວຍເຫຼືອ ແມ່ຍິງທີ່ຕ້ອງປົກປ້ອງພິເສດ.

**ມາດຕາ 60 (ໃໝ່) ຄວາມຮັບຜິດຊອບຕໍ່ການໃຫ້ຄຳປຶກສາຂອງ ສະຫະພັນແມ່ຍິງລາວ**

ສະຫະພັນແມ່ຍິງລາວ ມີຄວາມຮັບຜິດຊອບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃນການບໍລິການໃຫ້ຄຳປຶກສາ, ຄຳແນະນຳດ້ານຕ່າງໆ ທີ່ພົວພັນກັບສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ໃຫ້ແກ່ແມ່ຍິງ ເຊັ່ນ ການໃຫ້ຄຳປຶກສາ ດ້ານກົດໝາຍ, ດ້ານແນວຄິດຈິດໃຈ, ດ້ານສຸຂະພາບ ແລະ ດ້ານອື່ນ.

**ມາດຕາ 61 (ໃໝ່) ຄວາມຮັບຜິດຊອບຕໍ່ການໃຫ້ຄຳປຶກສາຂອງພາກສ່ວນອື່ນ**

ພາກສ່ວນອື່ນທີ່ເຮັດໜ້າທີ່ໃນການປົກປ້ອງ ແລະ ຊ່ວຍເຫຼືອແມ່ຍິງ ມີຄວາມຮັບຜິດຊອບໃນການໃຫ້ຄຳປຶກສາ ໂດຍປະສານສົມທົບກັບການຈັດຕັ້ງໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ຂອງສະຫະພັນແມ່ຍິງລາວ ທີ່ກ່ຽວຂ້ອງຕາມພາລະບົດບາດຂອງຕົນ.

## ພາກທີ V
## ການຈັດຕັ້ງໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ ຂອງສະຫະພັນແມ່ຍິງລາວ

**ມາດຕາ 62 (ໃໝ່) ການຈັດຕັ້ງໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ**

ການຈັດຕັ້ງໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ ປະກອບດ້ວຍ:

1. ສູນໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ສູນກາງສະຫະພັນແມ່ຍິງລາວ;
2. ຂະແໜງໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ;
3. ໜ່ວຍງານໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ສະຫະພັນແມ່ຍິງເມືອງ, ນະຄອນ;
4. ສະຫະພັນແມ່ຍິງ ຮາກຖານ.

ຜູ້ໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ມີມາດຕະຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການ.

**ມາດຕາ 63 (ໃໝ່) ສິດ ແລະ ໜ້າທີ່ຂອງການຈັດຕັ້ງໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ**

ການຈັດຕັ້ງໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ ສູນກາງສະຫະພັນແມ່ຍິງລາວ, ສະຫະພັນແມ່ຍິງ ຂັ້ນແຂວງ, ຂັ້ນເມືອງ, ຮາກຖານ ມີ ສິດ ແລະ ໜ້າທີ່ ໃນການບໍລິການໃຫ້ຄໍາປຶກສາ ແບບເຊິ່ງໜ້າ, ທາງໂທລະສັບ, ສື່ອອນລາຍ, ແບບເຄື່ອນທີ່ ໂດຍບໍ່ເສຍຄ່າ, ຮັບຄໍາສະເໜີ, ເຂົ້າຮ່ວມ ຫຼື ຈັດຕັ້ງການໄກ່ເກ່ຍບັນຫາທີ່ກ່ຽວຂ້ອງກັບສິດ ແລະ ຜົນປະໂຫຍດອັນຊອບທໍາຂອງແມ່ຍິງ ພ້ອມທັງປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອເກັບກໍາຂໍ້ມູນ ແລະ ແກ້ໄຂບັນຫາດັ່ງກ່າວ ຕາມພາລະບົດບາດຂອງຕົນ.

**ມາດຕາ 64 (ໃໝ່) ສິດ ແລະ ໜ້າທີ່ຂອງສູນໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ສູນກາງສະຫະພັນແມ່ຍິງລາວ**

ສູນໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ສູນກາງສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃນການຄົ້ນຄວ້າ, ສ້າງ, ປັບປຸງ ແລະ ປະກອບຄໍາ ເຫັນຕໍ່ຮ່າງ ກົດໝາຍ, ນິຕິກໍາໃຕ້ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງກັບວຽກງານໃຫ້ຄໍາປຶກສາ, ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງແມ່ຍິງ;

2. ສ້າງແຜນການເຄື່ອນໄຫວວຽກງານໃຫ້ຄໍາປຶກສາ, ປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ແມ່ຍິງຖືກເຄາະຮ້າຍ ໃນຂອບເຂດທົ່ວປະເທດດ້ວຍຫຼາຍຮູບການ;

3. ສ້າງ, ບໍາລຸງ, ຍົກລະດັບຄວາມຮູ້ ຄວາມສາມາດ ດ້ານວິຊາການໃຫ້ຄໍາປຶກສາ, ການປ້ອງກັນ, ການປົກປ້ອງ, ການຊ່ວຍເຫຼືອ ແລະ ການສົ່ງຕໍ່ແມ່ຍິງຖືກເຄາະຮ້າຍ ແກ່ພະນັກງານທີ່ເຮັດໜ້າທີ່ດັ່ງກ່າວ ທັງສູນກາງ ແລະ ທ້ອງຖິ່ນ;

4. ສຶກສາອົບຮົມ, ໃຫ້ຄໍາປຶກສາ ແບບເຊິ່ງໜ້າ, ທາງໂທລະສັບ, ສື່ອອນລາຍ ແລະ ແບບເຄື່ອນທີ່ທາງດ້ານກົດໝາຍ, ດ້ານຈິດໃຈ ແລະ ດ້ານສຸຂະພາບ ແກ່ແມ່ຍິງທີ່ຕ້ອງປົກປ້ອງພິເສດ;

5. ຈັດຕັ້ງການຝຶກອົບຮົມ, ໂຄສະນາ ເຜີຍແຜ່ ລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງກັບສິດ ແລະ ຜົນປະໂຫຍດຂອງແມ່ຍິງໃຫ້ແຕ່ລະກຸ່ມເປົ້າໝາຍ;

6. ຊີ້ນໍາ, ຊຸກຍູ້, ຕິດຕາມການປະຕິບັດກົດໝາຍ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງແມ່ຍິງ ແລະ ວຽກງານໃຫ້ຄໍາປຶກສາ, ການປ້ອງກັນ, ການປົກປ້ອງ, ການຊ່ວຍເຫຼືອ, ການສົ່ງຕໍ່ແມ່ຍິງຖືກເຄາະຮ້າຍ ຕາມຄວາມຮັບຜິດຊອບຂອງຕົນ;

7. ເປັນຜູ້ປົກປ້ອງທາງດ້ານກົດໝາຍ ແລະ ສະໜອງການຊ່ວຍເຫຼືອອັນຈຳເປັນ ທາງດ້ານ ທີ່ພັກເຊົາຊົ່ວຄາວທີ່ປອດໄພ, ການແພດ, ກົດໝາຍ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ, ເສດຖະກິດ, ການນຳສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ແກ່ແມ່ຍິງທີ່ຕ້ອງປົກປ້ອງພິເສດ;

8. ຮັບການແຈ້ງຄວາມ, ຮັບ, ພິຈາລະນາ ແລະ ຄົ້ນຄວ້າ ຄຳສະເໜີຂອງແມ່ຍິງທີ່ຕ້ອງປົກປ້ອງພິເສດ;

9. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນ, ເຂົ້າຮ່ວມ, ພິຈາລະນາ ແລະ ແກ້ໄຂ, ຈັດຕັ້ງການໄກ່ເກ່ຍ ຫຼື ເຂົ້າຮ່ວມການໄກ່ເກ່ຍ, ຕິດຕາມ ຊຸກຍູ້ ການພິຈາລະນາ ແລະ ແກ້ໄຂຄຳສະເໜີ ທີ່ພົວພັນກັບສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ;

10. ແຈ້ງຜົນການແກ້ໄຂໃຫ້ຜູ້ເປັນເຈົ້າຂອງຄຳສະເໜີ ຢ່າງເປັນລາຍລັກອັກສອນ;

11. ຈັດກອງປະຊຸມຮ່ວມກັບພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອແກ້ໄຂກໍລະນີແມ່ຍິງທີ່ຕ້ອງປົກປ້ອງພິເສດ ຕາມກົດໝາຍ;

12. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຊຸດຝຶກອົບຮົມວິຊາຊີບໄລຍະສັ້ນ ແກ່ແມ່ຍິງທີ່ຕ້ອງປົກປ້ອງພິເສດ ຕາມເງື່ອນໄຂຕົວຈິງ;

13. ຕິດຕາມ, ຊຸກຍູ້, ໃຫ້ຄຳແນະນຳ ກ່ຽວກັບການຄຸ້ມຄອງ ແລະ ບໍລິຫານສູນ ທີ່ຂຶ້ນກັບຕົນໃນຂອບເຂດທົ່ວປະເທດ;

14. ສັງລວມສະຖິຕິ ຂໍ້ມູນ ກ່ຽວກັບແມ່ຍິງທີ່ຕ້ອງປົກປ້ອງພິເສດ ທີ່ມາຂໍຄຳປຶກສາ ເພື່ອປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງຊອກຫາວິທີແກ້ໄຂ;

15. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 65 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ**

ຂະແໜງໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສ້າງແຜນການເຄື່ອນໄຫວວຽກງານໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ;

2. ສ້າງ, ບຳລຸງ, ຍົກລະດັບຄວາມຮູ້ ຄວາມສາມາດ ກ່ຽວກັບການໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແກ່ພະນັກງານທີ່ເຮັດໜ້າທີ່ດັ່ງກ່າວ;

3. ຈັດຕັ້ງການ ຝຶກອົບຮົມ, ໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງກັບ ສິດ ແລະ ຜົນປະໂຫຍດຂອງແມ່ຍິງ;

4. ຊີ້ນຳ, ຊຸກຍູ້, ຕິດຕາມ ການປະຕິບັດກົດໝາຍທີ່ພົວພັນກັບສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ;

5. ຮັບການແຈ້ງຄວາມ, ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງແມ່ຍິງ ທີ່ຕ້ອງປົກປ້ອງພິເສດ;

6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນ, ເຂົ້າຮ່ວມ, ຕິດຕາມ ຊຸກຍູ້ການພິຈາລະນາ ແລະ ແກ້ໄຂຄຳສະເໜີທີ່ພົວພັນກັບສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ;

7. ແຈ້ງຜົນການແກ້ໄຂໃຫ້ຜູ້ເປັນເຈົ້າຂອງຄຳສະເໜີ ຢ່າງເປັນລາຍອັກສອນ;

8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຝຶກອົບຮົມວິຊາຊີບໄລຍະສັ້ນ ແກ່ແມ່ຍິງ ຕາມເງື່ອນໄຂຕົວຈິງ;

9. ສັງລວມສະຖິຕິກ່ຽວກັບແມ່ຍິງທີ່ຕ້ອງປົກປ້ອງພິເສດ ຊຶ່ງມາຂໍຄຳປຶກສາ ເພື່ອປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງຊອກຫາວິທີແກ້ໄຂ;

10. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 66 (ໃໝ່) ສິດ ແລະ ໜ້າທີ່ຂອງໜ່ວຍງານໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ສະຫະພັນ ແມ່ຍິງ ເມືອງ, ນະຄອນ**

ໜ່ວຍງານໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສ້າງແຜນການເຄື່ອນໄຫວວຽກງານໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ;

2. ຂຶ້ນແຜນສ້າງ, ບຳລຸງ, ຍົກລະດັບຄວາມຮູ້ ຄວາມສາມາດ ກ່ຽວກັບການໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແກ່ພະນັກງານທີ່ເຮັດໜ້າທີ່ດັ່ງກ່າວ;

3. ຈັດຕັ້ງການຝຶກອົບຮົມ, ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງກັບ ສິດ ແລະ ຜົນປະໂຫຍດຂອງແມ່ຍິງ;

4. ຊີ້ນຳ, ຊຸກຍູ້, ຕິດຕາມ ການປະຕິບັດກົດໝາຍທີ່ພົວພັນກັບສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ;

5. ຮັບການແຈ້ງຄວາມ, ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງແມ່ຍິງ ທີ່ຕ້ອງປົກປ້ອງພິເສດ;

6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນ, ເຂົ້າຮ່ວມ, ຕິດຕາມ ຊຸກຍູ້ ການພິຈາລະນາ ແລະ ແກ້ໄຂຄຳສະເໜີທີ່ພົວພັນກັບສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ;

7. ແຈ້ງຜົນການແກ້ໄຂໃຫ້ຜູ້ເປັນເຈົ້າຂອງຄຳສະເໜີ ຢ່າງເປັນລາຍລັກອັກສອນ;

8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຝຶກອົບຮົມວິຊາຊີບໄລຍະສັ້ນ ແກ່ແມ່ຍິງທີ່ຕ້ອງປົກປ້ອງພິເສດ ຕາມເງື່ອນໄຂຕົວຈິງ;

9. ສັງລວມສະຖິຕິ ຂໍ້ມູນ ກ່ຽວກັບແມ່ຍິງທີ່ຕ້ອງປົກປ້ອງພິເສດ ຊຶ່ງມາຂໍຄຳປຶກສາ ເພື່ອປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງຊອກຫາວິທີແກ້ໄຂ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 67 (ໃໝ່) ສິດ ແລະ ໜ້າທີ່ຂອງສະຫະພັນແມ່ຍິງ ຮາກຖານ**

ສະຫະພັນແມ່ຍິງ ຮາກຖານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຮັບຕ້ອນ ແລະ ໃຫ້ຄຳປຶກສາແກ່ແມ່ຍິງ;

2. ຮ່ວມມື ແລະ ເຂົ້າຮ່ວມກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນທີ່ພົວພັນກັບຄຳສະເໜີກ່ຽວກັບສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ;

3. ຮັບການແຈ້ງຄວາມ ແລະ ເຂົ້າຮ່ວມ ໃນການຄົ້ນຄວ້າ, ໄກ່ເກ່ຍບັນຫາຕ່າງໆ ທີ່ພົວພັນກັບຄຳສະເໜີຂອງແມ່ຍິງ;

4. ສັງລວມສະຖິຕິ ຂໍ້ມູນ ກ່ຽວກັບແມ່ຍິງທີ່ຕ້ອງປົກປ້ອງພິເສດ ຊຶ່ງມາຂໍຄຳປຶກສາ ເພື່ອປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຊອກຫາວິທີແກ້ໄຂ;

5. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VI
## ກອງທຶນພັດທະນາແມ່ຍິງ

**ມາດຕາ 68 (ໃໝ່) ກອງທຶນພັດທະນາແມ່ຍິງ**

ກອງທຶນພັດທະນາແມ່ຍິງ ແມ່ນ ກອງທຶນທີ່ລັດສ້າງຕັ້ງຂຶ້ນ ເພື່ອສະສົມ ແລະ ລະດົມທຶນ ຈາກແຫຼ່ງຕ່າງໆ ແນໃສ່ຮັບປະກັນໃຫ້ມີງົບປະມານພຽງພໍ ແລະ ຍືນຍົງ ນໍາໃຊ້ເຂົ້າໃນວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ກອງທຶນພັດທະນາແມ່ຍິງ ຂຽນຫຍໍ້ວ່າ "ກພຍ".

**ມາດຕາ 69 (ໃໝ່) ແຫຼ່ງກອງທຶນພັດທະນາແມ່ຍິງ**

ກອງທຶນພັດທະນາແມ່ຍິງ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ;
3. ການຊ່ວຍເຫຼືອຂອງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
4. ການເຄື່ອນໄຫວກິດຈະກໍາໃດໜຶ່ງ ທີ່ຖືກຕ້ອງຕາມກົດໝາຍ;
5. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 70 (ໃໝ່) ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນ**

ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນພັດທະນາແມ່ຍິງ ຕ້ອງຮັບປະກັນ ຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

ກອງທຶນພັດທະນາແມ່ຍິງ ນໍາໃຊ້ເຂົ້າໃນວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ເຊັ່ນ ການພັດທະນາທາງດ້ານຮ່າງກາຍ, ດ້ານແນວຄິດຈິດໃຈ, ດ້ານວັດທະນະທໍາ, ດ້ານການສຶກສາ ແລະ ກິລາ, ດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ, ດ້ານວິຊາຊີບ ແລະ ສີມືແຮງງານ, ການໃຫ້ຄໍາປຶກສາ, ການຊ່ວຍເຫຼືອບັນເທົາທຸກອັນຈໍາເປັນ ແລະ ຮີບດ່ວນແກ່ແມ່ຍິງ.

ສໍາລັບການຈັດຕັ້ງ, ການຄຸ້ມຄອງ ແລະ ການເຄື່ອນໄຫວ ຂອງກອງທຶນພັດທະນາແມ່ຍິງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 71 (ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ເຄື່ອນໄຫວວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ຫຼື ພັກພວກ ຂອງຕົນ;

2. ຂັດຂວາງການເຄື່ອນໄຫວວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

3. ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງຕໍ່ ຮ່າງກາຍ, ຈິດໃຈ, ເພດ, ຊັບສິນ ຂອງແມ່ຍິງ;

4. ໂຄສະນາ ເຜີຍແຜ່ ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ທີ່ຂັດກັບກົດໝາຍ ແລະ ວັດທະນະທໍາ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ ແລະ ຂອງເຜົ່າ;

5. ເມີນເສີຍ ແລະ ບໍ່ໃຫ້ການຊ່ວຍເຫຼືອຕໍ່ແມ່ຍິງ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 72 (ໃໝ່) ຂໍ້ຫ້າມສຳລັບຜູ້ໄດ້ຮັບ ການຊ່ວຍເຫຼືອ ແລະ ການໃຫ້ຄຳປຶກສາ**

ຫ້າມ ຜູ້ໄດ້ຮັບ ການຊ່ວຍເຫຼືອ ແລະ ການໃຫ້ຄຳປຶກສາ ມີພຶດຕິກຳ ດັ່ງນີ້:

1. ໃຊ້ຄຳເວົ້າທີ່ບໍ່ສຸພາບ ຫຼື ສະແດງກິລິຍາ ທ່າທີແຂງກະດ້າງ ຕໍ່ພະນັກງານ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງ;
2. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງກັບຄວາມຈິງໃຫ້ແກ່ການຈັດຕັ້ງ ຫຼື ປົກປິດຂໍ້ມູນຄວາມຈິງ;
3. ສວຍໂອກາດຂໍການຊ່ວຍເຫຼືອໃຫ້ບຸກຄົນອື່ນ ເພື່ອຫາຜົນປະໂຫຍດແກ່ຕົນ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 73 (ໃໝ່) ຂໍ້ຫ້າມສຳລັບ ຜູ້ໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ, ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ຜູ້ໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ, ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ຜູ້ຂໍຄຳປຶກສາ ຫຼື ແມ່ຍິງທີ່ຕ້ອງປົກປ້ອງພິເສດ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ພັກພວກ ຂອງຕົນ;

2. ທວງເອົາ, ຂໍເອົາ, ຮັບເອົາສິນບົນ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

3. ເມີນເສີຍ ຫຼື ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ຂອງຕົນ, ປະຕິເສດການໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ;

4. ກົດໜ່ວງ, ຖ່ວງດຶງ ເອກະສານ ໃນການແກ້ໄຂບັນຫາ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

5. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນຳໃຊ້ວິທີການທີ່ບໍ່ຖືກຕ້ອງ;

6. ເປີດເຜີຍ ຂໍ້ມູນ ຄວາມລັບ ຂອງຜູ້ຂໍຄຳປຶກສາ ຫຼື ແມ່ຍິງທີ່ຕ້ອງປົກປ້ອງພິເສດ ໂດຍບໍ່ໄດ້ຮັບອະນຸຍາດ;

7. ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

8. ຮຽກເອົາ ຄ່າທຳນຽມ ຫຼື ຄ່າບໍລິການບໍ່ຖືກຕ້ອງຕາມລະບຽບການ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VIII
# ການຄຸ້ມຄອງ ແລະ ການກວດກາ ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ
## ໝວດທີ 1
## ການຄຸ້ມຄອງວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ

**ມາດຕາ 74 (ປັບປຸງ) ອົງການຄຸ້ມຄອງວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ**

ລັດ ຄຸ້ມຄອງວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ສູນກາງສະຫະພັນແມ່ຍິງລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ປະກອບດ້ວຍ:

1. ສູນກາງສະຫະພັນແມ່ຍິງລາວ;
2. ສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ;
3. ສະຫະພັນແມ່ຍິງ ເມືອງ, ນະຄອນ;
4. ສະຫະພັນແມ່ຍິງ ຮາກຖານ.

**ມາດຕາ 75 (ປັບປຸງ) ສິດ ແລະ ໜ້າທີ່ຂອງສູນກາງສະຫະພັນແມ່ຍິງລາວ**

ໃນການຄຸ້ມຄອງວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ສູນກາງສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ເພື່ອສະເໜີຂັ້ນເທິງ ພິຈາລະນາ;
2. ຫັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;
4. ຊີ້ນໍາ ການເຄື່ອນໄຫວວຽກງານຂັ້ນລຸ່ມຂອງຕົນ ແລະ ການຈັດຕັ້ງໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ;
5. ຊີ້ນໍາ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບການພັດທະນາ ແລະ ປົກປ້ອງແມ່ຍິງ;
6. ສ້າງ ແລະ ບໍາລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນໍາໃຊ້ບຸກຄະລາກອນ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ລວມທັງຄົ້ນຄວ້າວິທະຍາສາດ ກ່ຽວກັບການພັດທະນາ ແລະ ປົກປ້ອງແມ່ຍິງ;
7. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີຂອງແມ່ຍິງ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;
8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;
9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;
10. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 76 (ໃໝ່) ສິດ ແລະ ໜ້າທີ່ຂອງສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

3. ຊີ້ນຳ ການເຄື່ອນໄຫວວຽກງານຂັ້ນລຸ່ມຂອງຕົນ ແລະ ຂະແໜງ, ໜ່ວຍງານ ໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ແລະ ສະຫະພັນແມ່ຍິງ ຮາກຖານ;

4. ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບການພັດທະນາ ແລະ ປົກປ້ອງແມ່ຍິງ;

5. ສະເໜີສ້າງ ແລະ ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

6. ສັງລວມຂໍ້ມູນ, ສະຖິຕິ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດກິດຈະກຳ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

7. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງແມ່ຍິງ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ຕາມການມອບໝາຍ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ຕໍ່ສູນກາງສະຫະພັນແມ່ຍິງລາວ ແລະ ຂັ້ນເທິງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 77 (ໃໝ່) ສິດ ແລະ ໜ້າທີ່ຂອງສະຫະພັນແມ່ຍິງ ເມືອງ, ນະຄອນ**

ໃນການຄຸ້ມຄອງວຽກງານ ພັດທະນາ ແລະ ປົກປ້ອງແມ່ຍິງ ສະຫະພັນແມ່ຍິງ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

3. ຊີ້ນຳ ການເຄື່ອນໄຫວວຽກງານຂັ້ນລຸ່ມຂອງຕົນ ແລະ ໜ່ວຍງານໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ແລະ ສະຫະພັນແມ່ຍິງ ຮາກຖານ;

4. ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບການພັດທະນາ ແລະ ປົກປ້ອງແມ່ຍິງ;

5. ສະເໜີສ້າງ ແລະ ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

6. ສັງລວມຂໍ້ມູນ, ສະຖິຕິ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດກິດຈະກຳ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

7. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງແມ່ຍິງ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ຕໍ່ສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ ແລະ ຂັ້ນເທິງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 78 (ໃໝ່) ສິດ ແລະ ໜ້າທີ່ຂອງສະຫະພັນແມ່ຍິງ ຮາກຖານ**

ໃນການຄຸ້ມຄອງວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ສະຫະພັນແມ່ຍິງ ຮາກຖານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານ ພັດທະນາ ແລະ ປົກປ້ອງແມ່ຍິງ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

3. ໃຫ້ການບໍລິການໃຫ້ຄຳປຶກສາແກ່ແມ່ຍິງ;

4. ເກັບກຳຂໍ້ມູນ, ສະຖິຕິ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດກິດຈະກຳ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

5. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງແມ່ຍິງ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;

6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ຕໍ່ສະຫະພັນແມ່ຍິງ ເມືອງ, ນະຄອນ ແລະ ຂັ້ນເທິງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 79 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບສະຫະພັນແມ່ຍິງຂັ້ນຂອງຕົນ ໃນການຄຸ້ມຄອງວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ

**ມາດຕາ 80 (ໃໝ່) ອົງການກວດກາວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ**

ອົງການກວດກາວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 74 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 81 (ໃໝ່) ເນື້ອໃນການກວດກາ**

ການກວດກາ ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ;
2. ການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ເຮັດໜ້າທີ່ໃຫ້ຄຳປຶກສາ ແກ່ແມ່ຍິງ;
3. ການຕິດຕາມ ກວດກາ ຄຳສະເໜີ ລວມທັງຜົນການແກ້ໄຂກ່ຽວກັບວຽກງານພັດທະນາ ແລະ ປົກປ້ອງ ແມ່ຍິງ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 82 (ໃໝ່) ຮູບການການກວດກາ**

ການກວດກາ ວຽກງານພັດທະນາ ແລະ ປົກປ້ອງແມ່ຍິງ ມີ ສາມຮູບການ ດັ່ງນີ້:

1. ການກວດກາແບບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີກຳ ນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີ ຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກ ກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານພັດທະນາ ແລະ ປົກປ້ອງແມ່ຍິງນັ້ນ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 83 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ເຂົ້າຮ່ວມ, ຄຸ້ມຄອງ, ກວດກາ ການພັດທະນາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ, ຊ່ວຍເຫຼືອແມ່ຍິງ ຖືກເຄາະຮ້າຍ, ສະກັດກັ້ນ, ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ລວມທັງການໃຫ້ຄຳປຶກສາ ຕໍ່ແມ່ຍິງ ແລະ ການໃຫ້ຂໍ້ມູນ ກ່ຽວກັບການລະເມີດສິດ ແລະ ຜົນປະໂຫຍດຂອງແມ່ຍິງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 84 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 85 (ໃໝ່) ມາດຕະການທາງອາຍາຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ**

ບຸກຄົນ ຫຼື ນິຕິບຸກຄົນໃດ ຫາກໄດ້ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ດ້ວຍການ ຈຳແນກ, ກີດກັ້ນ ບໍ່ໃຫ້ແມ່ຍິງ ນຳໃຊ້ສິດຂອງຕົນ ຈະຖືກ ຕຳນິວິຈານ ຫຼື ດັດສ້າງ ໂດຍບໍ່ຕັດອິດສະລະພາບ ຫຼື ລົງໂທດ ຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3,000,000 (ສາມລ້ານ) ກີບ ຫາ 10,000,0000 (ສິບລ້ານ) ກີບ.

**ມາດຕາ 86 (ໃໝ່) ມາດຕະການທາງອາຍາຕໍ່ຜູ້ບໍ່ໃຫ້ການຊ່ວຍເຫຼືອແກ່ແມ່ຍິງຖືກເຄາະຮ້າຍ**

ບຸກຄົນ ຫຼື ນິຕິບຸກຄົນໃດ ຫາກບໍ່ໄດ້ໃຫ້ການຊ່ວຍເຫຼືອແກ່ແມ່ຍິງຖືກເຄາະຮ້າຍ ຈາກການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງ ທັງທີ່ບຸກຄົນ ຫຼື ນິຕິບຸກຄົນນັ້ນ ມີເງື່ອນໄຂພໍຊ່ວຍເຫຼືອໄດ້ ຈະຖືກລົງໂທດຕັດອິດສະລະ ພາບແຕ່ ສາມເດືອນ ຫາ ໜຶ່ງ ປີ ແລະ ຈະຖືກປັບໃໝແຕ່ 1,000,000 (ໜຶ່ງລ້ານ) ກີບ ຫາ 5,000,000 (ຫ້າລ້ານ) ກີບ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 87 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສູນກາງສະຫະພັນແມ່ຍິງລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 88 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 8 ມີນາ 2025 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ສະບັບເລກທີ 08/ສພຊ, ລົງວັນທີ 22 ຕຸລາ 2004.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ